ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສໍານັກງານນາຍົກລັດຖະມົນຕີ

ເລກທີ 182 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 27 ມິຖຸນາ 2005

# ດໍາລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການ ໂຮມເມືອງພູນ ແລະ ເມືອງໄຊສົມບູນ

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສ.ປ.ປ ລາວ ສະບັບລົງວັນທີ 6 ພຶດສະພາ 2003.
- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມການສະເໜີ ຂອງຫົວໜ້າເຂດພິເສດໄຊສົມບູນ ແລະ ການຄົ້ນຄວ້ານໍາສະເໜີຂອງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 01/ທປຄ, ລົງວັນທີ 7 ມິຖຸນາ 2005.

## ນາຍົກລັດຖະມົນຕີ ອອກດໍາລັດ:

**ມາດຕາ 1.** ໂຮມເມືອງພູນ ແລະ ເມືອງໄຊສົມບູນ ເຂົ້າກັນເປັນເມືອງໜຶ່ງ ເອີ້ນຊື່ວ່າ: **ເມືອງໄຊສົມບູນ** ຂຶ້ນກັບເຂດພິເສດໄຊສົມບູນ; ຊຶ່ງລວມມີ 55 ບ້ານ, ພົນລະເມືອງ 24.697 ຄົນ, ຍິງ 12.418 ຄົນ.

**ມາດຕາ 2.** ມອບໃຫ້ອົງການປົກຄອງເຂດພິເສດໄຊສົມບູນ ເປັນຜູ້ສໍາຫຼວດເກັບກໍາຂໍ້ມູນ, ປະສານງານກັບອົງການປົກຄອງສອງເມືອງ ເພື່ອກະກຽມ ແລະ ດໍາເນີນການຕົວຈິງ ໃຫ້ສໍາເລັດໃນເວລາອັນຄວນ.

**ມາດຕາ 3.** ໃຫ້ສໍານັກງານນາຍົກລັດຖະມົນຕີ, ຄະນະຈັດຕັ້ງສູນກາງພັກ ແລະ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຈົ່ງອໍານວຍຄວາມສະດວກ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມດໍາລັດສະບັບນີ້.

**ມາດຕາ4.** ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ

ບຸນຍັງ ວໍລະຈິດ